ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ: 00599 /ກພສ
ນະຄອນຫລວງວຽງຈັນ, ວັນທີ: 19 OCT 2012

ຮຽນ/ເຖິງ: - ທ່ານຫົວໜ້າ ກົມຂົນສົ່ງ ກະຊວງໂຍທາທິການ ແລະຂົນສົ່ງ.
- ທ່ານ ຫົວໜ້າ ກົມການນຳເຂົ້າ ແລະສົ່ງອອກ ກະຊວງອຸດສາຫະກຳ-ການຄ້າ.

ເລື່ອງ: ການຂໍອະນຸຍາດນຳເຂົ້າພາຫະນະ, ນ້ຳມັນເຊື້ອໄຟ ແລະສິນຄ້າປະເພດລັດຄວບຄຸມ.

- ອີງຕາມ ກົດໝາຍວ່າດ້ວຍພາສີ, ສະບັບເລກທີ: 04/ສພຊ, ລົງວັນທີ: 20 ທັນວາ 2011.
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບເລກທີ: 02/ສພຊ, ລົງວັນທີ: 08 ກໍລະກົດ 2009.
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍລົງທຶນສະບັບເລກທີ: 119/ນຍ, ລົງວັນທີ: 20 ເມສາ 2011.

ກົມພາສີ ຂໍຖືເປັນກຽດສະເໜີມາຍັງທ່ານຊາບວ່າ: ໃນໄລຍະຜ່ານມາກົມພາສີໄດ້ເຮັດໃບສະເໜີຫາກົມຂົນສົ່ງ ກະຊວງໂຍທາທິການ ແລະຂົນສົ່ງ ແລະກົມນຳເຂົ້າ-ສົ່ງອອກ ກະຊວງອຸດສາຫະກຳ-ການຄ້າ ເພື່ອພິຈາລະນາອອກໃບອະນຸຍາດນຳເຂົ້າພາຫະນະ, ນ້ຳມັນເຊື້ອໄຟ ແລະສິນຄ້າປະເພດລັດຄວບຄຸມ ທີ່ມີຂໍ້ຕົກລົງຮັບຮອງແຜນນຳເຂົ້າປະຈຳປີແລ້ວ, ເຊິ່ງເຫັນວ່າຂັ້ນຕອນດັ່ງກ່າວເຮັດໃຫ້ມີຄວາມຊັກຊ້າ, ຫລາຍຂັ້ນຫລາຍຂອດຊຶ່ງສ້າງຄວາມບໍ່ສະດວກວ່ອງໄວໃຫ້ແກ່ຜູ້ປະກອບການ. ສະນັ້ນ, ເພື່ອຫລຸດຂັ້ນຕອນການປະກອບເອກະສານ ແລະເຮັດໃຫ້ມີຄວາມສະດວກແກ່ຜູ້ປະກອບການ. ກົມພາສີຂໍແຈ້ງມາຍັງທ່ານຊາບວ່າ: ນັບແຕ່ວັນທີ: 01 ພະຈິກ 2012 ເປັນຕົ້ນໄປທາງກົມພາສີຈະໄດ້ຢຸດຕິການເຮັດໃບສະເໜີດັ່ງກ່າວ ແລະຂໍໃຫ້ພວກທ່ານພິຈາລະນາອອກອະນຸຍາດນຳເຂົ້າສິນຄ້າປະເພດດັ່ງກ່າວຕາມລະບຽບການຂອງທ່ານໂດຍອີງໃສ່ບັນດາເອກະສານດັ່ງນີ້:

1. ສຳລັບຂັ້ນລັດຖະບານ: ແມ່ນໃຫ້ພິຈາລະນາຕາມແຈ້ງການຂອງລັດຖະບານ;
2. ສຳລັບການລົງທຶນຂັ້ນອຸນກາງ: ແມ່ນໃຫ້ພິຈາລະນາຕາມຂໍ້ຕົກລົງຮັບຮອງແຜນນຳເຂົ້າປະຈຳປີຂອງລັດຖະມົນຕີກະຊວງການເງິນ ແລະລະໂບດນຳສົ່ງຂໍ້ຕົກລົງຂອງກົມພາສີ.

ດັ່ງນັ້ນ, ສະເໜີມາຍັງທ່ານພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມພາສີ

ກະຊວງການເງິນ
ກົມພາສີ

ອາດສະພັງທອງ ສີພັນດອນ
Athsaphangthong SIPHANDON